ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

WELLS FARGO

# ຂ່າວເຊີນ

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຮັບລາງວັນ ທະນາຄານດີເດັ່ນດ້ານການດຳເນີນງານ ວຽກງານການໂອນເງິນລະຫວ່າງປະເທດປະຈຳປີ 2017-2018 (Operational Excellence Award 2017-2018)

ໃນວັນພຸດ ວັນທີ 29 ສິງຫາ 2018 ທີ່ ທຄຕລ ສຳນັກງານໃຫ່ຍ ທ່ານ ລາໃຈ ຄັນພຣະວົງສ໌ ຮອງຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການມາຢ້ຽມຢາມຂອງຄະນະທະນາຄານ Wells Fargo ສະຖາບັນການເງິນທີ່ໃຫ່ຍທີ່ສຸດອັນດັບ 5 ຂອງປະເທດ ສະຫະລັດອາເມລິກາ. ໂດຍທັງສອງຝ່າຍໄດ້ໂອ້ລົມເຖິງການດຳເນີນງານເຊິ່ງກັນ ແລະ ກັນ. ໃນໂອກາດດຽວກັນນີ້, ທະນາຄານ Wells Fargo ໄດ້ມອບລາງວັນທະນາຄານດີເດັ່ນດ້ານການດຳເນີນວຽກງານການໂອນເງິນລະຫວ່າງປະເທດປະຈຳປີ 2017-2018 ໃຫ້ແກ່ ທຄຕລ.

ລາງວັນທີ່ ທຄຕລ ໄດ້ຮັບໃນຄັ້ງນີ້ເປັນສິ່ງຢັ້ງຢືນເຖິງການຍອມຮັບຈາກສາກົນ ກ່ຽວກັບຄຸນະພາບໃນການໂອນເງິນລະຫວ່າງປະເທດ, ການໃຫ້ບໍລິການລູກຄ້າທີ່ທ່ວງທັນກັບຄວາມຕ້ອງການ ຂອງ ທຄຕລ ໃນປີ 2017-2018. ທຄຕລ ຈະສືບຕໍ່ພັດທະນາການໃຫ້ການບໍລິການທີ່ທັນສະໄໝ ວ່ອງໄວ ແລະ ມາດຕະຖານສາກົນ ເພື່ອອຳນວຍຄວາມສະດວກສະບາຍໃຫ້ແກ່ລູກຄ້າທຸກໆທ່ານ.







ທ່ານ ລາໃຈ ຄັນພຣະວົງສ໌ ຮອງຜູ້ອຳນວຍການໃຫ່ຍ ທຄຕລ ພ້ອມດ້ວຍຄະນະ ທຄຕລ (ຊ້າຍມື) ແລະ ຄະນະທະນາຄານ Wells Fargo (ຂວາມື)

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Facebook: BCEL Bank, Website: www.bcel.com.la